82 /

ລະບຽບການ 477/ລ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 777 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 23 SEP 2014

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການປະຕິບັດນະໂຍບາຍຕໍ່ພະນັກງານ ທະນາຄານແຫ່ງ ສປປ ລາວ ທີ່ໄປຍົກລະດັບ ຢູ່ພາຍໃນປະເທດ ແລະ ຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍລະບຽບລັດຖະກອນແຫ່ງ ສປປ ລາວ ເລກທີ 82/ນຍ ລົງວັນທີ 19/5/2003;
- ອີງຕາມຂໍ້ຕົກລົງຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເລກທີ 249/ທຫລ ລົງວັນທີ 10/7/2006, ເລກທີ 476/ທຫລ ລົງວັນທີ 28/11/2006, ເລກທີ 251/ທຫລ ລົງວັນທີ 23/5/2007 ແລະ ເລກທີ 630/ທຫລ ລົງວັນທີ 18/8/2014;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງແລະພະນັກງານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ I
## ວ່າດ້ວຍຫຼັກການລວມ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດອອກ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໃນການປະຕິບັດນະໂຍບາຍອຸດໜູນ ແລະ ຊຸກຍູ້ພະນັກງານທະນາຄານແຫ່ງ ສປປ ລາວ ທີ່ການຈັດຕັ້ງໄດ້ສົ່ງໄປຍົກລະດັບຢ່າງເປັນທາງການ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບສະພາບການຕົວຈິງ.

### ມາດຕາ 2 ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍ

ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍຕາມຂໍ້ຕົກລົງສະບັບນີ້ ແມ່ນພະນັກງານ ທຫລ ຜູ້ທີ່ການຈັດຕັ້ງໄດ້ອະນຸຍາດໃຫ້ໄປຍົກລະດັບຢ່າງເປັນທາງການ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມທຶນຊ່ວຍເຫຼືອຂອງລັດຖະບານປະເທດກ່ຽວຂ້ອງ ຫຼື ຕາມແຜນການຮ່ວມມື 2 ຝ່າຍ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ການຈັດຕັ້ງຂອງປະເທດກ່ຽວຂ້ອງ ຫຼື ດ້ວຍທຶນຂອງທະນາຄານແຫ່ງ ສປປ ລາວ ຫຼື ທຶນທີ່ໄດ້ຮັບຈາກພາກສ່ວນອື່ນໆ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

· ສຳລັບຜູ້ທີ່ໄປຕິດຕໍ່ພົວພັນຂໍທຶນຍົກລະດັບຈາກພາກສ່ວນຕ່າງໆດ້ວຍຕົນເອງ ຕ້ອງໄດ້ຮັບການອະນຸຍາດຢ່າງເປັນທາງການຈາກຄະນະຜູ້ອຳນວຍການໃຫ້ໄປຍົກລະດັບສາກ່ອນ ຈຶ່ງຈະໄດ້ຮັບນະໂຍບາຍດັ່ງກ່າວ.

## ໝວດທີ II
## ນະໂຍບາຍຕໍ່ພະນັກງານໄປບຳລຸງໄລຍະສັ້ນ

**ມາດຕາ 3 ການປະຕິບັດນະໂຍບາຍຕໍ່ແຕ່ລະເປົ້າໝາຍ**

ພະນັກງານທີ່ການຈັດຕັ້ງໄດ້ສົ່ງໄປຝຶກອົບຮົມ, ສຳມະນາ ຫຼື ໄປບຳລຸງໄລຍະສັ້ນບໍ່ເກີນໜຶ່ງປີ ຈະໄດ້ຮັບເງິນເດືອນ ແລະ ເງິນນະໂຍບາຍອື່ນໆ ຄືໃນເວລາຍັງເຮັດວຽກປົກກະຕິ. ນອກຈາກນັ້ນ ທະນາຄານແຫ່ງ ສປປ ລາວ ຈະປະຕິບັດນະໂຍບາຍເພີ່ມຕື່ມຕໍ່ພວກກ່ຽວ ໂດຍຂຶ້ນກັບສະຖານທີ່ຂອງການໄປຝຶກອົບຮົມ, ສຳມະນາ ຫຼື ບຳລຸງໄລຍະສັ້ນຕົວຈິງ ດັ່ງລຸ່ມນີ້:

**3.1. ຢູ່ພາຍໃນປະເທດ.**

**ກ. ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ (ທ່າງ່ອນ):**

1. ອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນ:

- ພະນັກງານປະຈຳການຢູ່ສູນກາງຈະໄດ້ຮັບອັດຕາກິນ **50.000** ກີບ/ຄົນ/ວັນ;

- ພະນັກງານທະນາຄານແຫ່ງ ສປປ ລາວ ປະຈຳພາກ ຄິດໄລ່ອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນຕາມອັດຕາໄປວຽກທາງລັດຖະການຂອງທະນາຄານແຫ່ງ ສປປ ລາວ ຕາມໄລຍະເວລາ ດັ່ງນີ້:

· ໄລຍະ 1 ເດືອນລົງມາ ຄິດໄລ່ 100%;

· ໄລຍະ 1 ເດືອນ 1 ວັນ ຫາ 3 ເດືອນ ຄິດໄລ່ 70%;

· ໄລຍະ 3 ເດືອນ 1 ວັນ ຫາ 6 ເດືອນ ຄິດໄລ່ 50% ແລະ ຖ້າເກີນ 6 ເດືອນ ຄິດໄລ່ 30%.

2. ອັດຕານ້ຳມັນ:

| | |
|---|---|
| - ຄະນະຜູ້ອຳນວຍການ ທຫລ | 80 ລິດ/ເດືອນ; |
| - ຜູ້ຊ່ວຍວຽກຄະນະຜູ້ອຳນວຍການ ທຫລ | 70 ລິດ/ເດືອນ; |
| - ຂັ້ນກົມ ແລະ ທຽບເທົ່າ | 60 ລິດ/ເດືອນ/ຄົນ; |
| - ຂັ້ນພະແນກ ແລະ ທຽບເທົ່າ | 50 ລິດ/ເດືອນ/ຄົນ; |
| - ຂັ້ນຂະແໜງລົງມາ | 40 ລິດ/ເດືອນ/ຄົນ. |

· ສຳລັບພະນັກງານທີ່ມາຈາກ ທຫລ ປະຈຳພາກ ແມ່ນຈະບໍ່ໄດ້ຮັບນະໂຍບາຍດັ່ງກ່າວ.

**ຂ. ຢູ່ທະນາຄານແຫ່ງ ສປປ ລາວ ຈະໄດ້ຮັບອັດຕາກິນ ຫຼື ເງິນອຸດໜູນ ດັ່ງນີ້:**

- ພະນັກງານປະຈຳການຢູ່ສູນກາງ ຈະໄດ້ຮັບອັດຕາກິນ **50.000** ກີບ/ຄົນ/ວັນ ໂດຍບໍ່ຈຳແນກຕຳແໜ່ງບໍລິຫານ ແລະ ການຝຶກອົບຮົມ, ສຳມະນາ ຫຼື ບຳລຸງໄລຍະສັ້ນ ທີ່ມີຫຼາຍພາກສ່ວນເຂົ້າຮ່ວມ ນັບແຕ່ **5** ພາກສ່ວນຂຶ້ນໄປ ຈຶ່ງຈະໄດ້ຮັບນະໂຍບາຍດັ່ງກ່າວ;

- ພະນັກງານທີ່ມາຈາກທະນາຄານແຫ່ງ ສປປ ລາວ ປະຈຳພາກ ຈະໄດ້ຮັບອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນ ໂດຍຄິດໄລ່ຄືກັບ ຂໍ້ **1** ຂອງມາດຕານີ້.

· ໃນກໍລະນີອົງການຈັດຕັ້ງສາກົນມາຈັດຝຶກອົບຮົມ, ສໍາມະນາ ຮ່ວມກັບທະນາຄານແຫ່ງ ສປປ ລາວ ແລະ ມີເບັ້ຍລ້ຽງໃຫ້ຜູ້ເຂົ້າຮ່ວມແລ້ວ, ທະນາຄານແຫ່ງ ສປປ ລາວ ຈະບໍ່ຄິດໄລ່ອັດຕາກິນໃຫ້ຕື່ມອີກ.

ຄ. ຢູ່ສະຖານທີ່ອື່ນໆ:

ພະນັກງານທີ່ການຈັດຕັ້ງໄດ້ສົ່ງໄປຝຶກອົບຮົມ, ສໍາມະນາ ຫຼື ໄປບໍາລຸງໄລຍະສັ້ນ ຢູ່ສະຖາບັນຕ່າງໆ ແມ່ນຈະໄດ້ຮັບນະໂຍບາຍ ອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນ ໂດຍຄິດໄລ່ຄືກັນກັບຂໍ້ 1 ຂອງມາດຕານີ້.

· ສໍາລັບພະນັກງານຢູ່ສໍານັກງານໃຫຍ່ ທີ່ການຈັດຕັ້ງສົ່ງໄປຝຶກອົບຮົມ, ສໍາມະນາ ຫຼື ບໍາລຸງໄລຍະສັ້ນ ຢູ່ທ້ອງຖິ່ນ ແມ່ນໃຫ້ຄິດໄລ່ ອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນ ຄືກັບການໄປວຽກທາງລັດຖະການ ແລະ ຈະບໍ່ໄດ້ຮັບນະໂຍບາຍ ອັດຕາກິນ 50.000 ກີບ/ຄົນ/ວັນ.

· ໃນການບໍາລຸງໄລຍະສັ້ນຖ້າພາກສ່ວນກ່ຽວຂ້ອງໃຫ້ປະກອບສ່ວນຈ່າຍຄ່າຮຽນ ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ຮັບຜິດຊອບ ແຕ່ຕ້ອງມີເອກະສານກ່ຽວຂ້ອງຢັ້ງຢືນຢ່າງເປັນທາງການ.

**3.2 ຢູ່ຕ່າງປະເທດ:**

- ປະຕິບັດນະໂຍບາຍໃນການໄປເຂົ້າຮ່ວມຝຶກອົບຮົມ, ສໍາມະນາ ແລະ ບໍາລຸງໄລຍະສັ້ນ ແຕ່ 1 ເດືອນ ເຖິງ 12 ເດືອນ ຈະໄດ້ຮັບເງິນອຸດໜູນ 80 ໂດລາສະຫະລັດ/ເດືອນ/ຄົນ;

- ພະນັກງານທີ່ການຈັດຕັ້ງໄດ້ສົ່ງໄປຝຶກອົບຮົມ, ສໍາມະນາ ຫຼື ໄປບໍາລຸງໄລຍະສັ້ນ ຢູ່ຕ່າງປະເທດດ້ວຍທຶນຂອງ ທຫລ ແມ່ນຈະໄດ້ຮັບນະໂຍບາຍອັດຕາກິນ, ຄ່າທີ່ພັກ ແລະ ເງິນແຮບຸກຄົນ ຄືກັບການໄປວຽກທາງລັດຖະການຢູ່ຕ່າງປະເທດ ຕາມລະບຽບການລວມຂອງ ທຫລ.

## ໝວດທີ III
## ນະໂຍບາຍຕໍ່ພະນັກງານທີ່ໄປຮຽນໄລຍະຍາວ (ເກີນ 1 ປີ)

### ມາດຕາ 4 ພະນັກງານທີ່ຮຽນຢູ່ພາຍໃນປະເທດ

**4.1 ນະໂຍບາຍຕໍ່ພະນັກງານທີ່ຮຽນໝົດມື້:**

- ພະນັກງານທີ່ການຈັດຕັ້ງສົ່ງໄປຮຽນໄລຍະຍາວ (ເກີນ 1 ປີ) ຢ່າງຂາດຕົວ, ໃນໄລຍະທີ່ໄປຮຽນຈະໄດ້ຮັບເງິນເດືອນ 90% ຂອງເງິນເດືອນພື້ນຖານຕາມ ຊັ້ນ-ຂັ້ນ ເງິນເດືອນຂອງຜູ້ກ່ຽວໄດ້ຮັບກ່ອນຈະໄປຮຽນ, ເງິນຕັດເຄື່ອງນຸ່ງ, ຄ່າໂທລະສັບ, ເງິນອຸດໜູນຄ່າເຊົ່າເຮືອນ, ຄ່າເຊື້ອເພີງທຸງຕົ້ມ ແລະ ນະໂຍບາຍສະຫວັດດີການສັງຄົມຕໍ່ພະນັກງານທະນາຄານແຫ່ງ ສປປ ລາວ ຄືກັບເວລາເຮັດວຽກປົກກະຕິ. ສໍາລັບເງິນອຸດໜູນຕໍາແໜ່ງ, ເງິນບໍາເນັດປະຈໍາປີ ແລະ ເງິນແຮງງານບໍ່ພັກການປະຈໍາປີ ແມ່ນຈະບໍ່ໄດ້ຮັບ.

- ພະນັກງານທຸກຄົນ ທີ່ໄປຮຽນໄລຍະຍາວ (ເກີນ 1 ປີ) ຢ່າງຂາດຕົວ ຈະໄດ້ຮັບອັດຕານໍ້າມັນເທົ່າກັບພະນັກງານວິຊາການທີ່ຍັງປະຈໍາການ ແລະ ຈະໄດ້ຮັບເງິນອຸດໜູນການສຶກສາຕາມກໍານົດເວລາຂອງຫຼັກສູດການຮຽນຈົນຮອດມື້ຮັບໃບປະກາດ ຄື:

| | |
|---|---|
| - ປະລິນຍາເອກ | **200.000** ກີບ/ເດືອນ; |
| - ປະລິນຍາໂທ ແລະ ອະນຸປະລິນຍາໂທ | **150.000** ກີບ/ເດືອນ; |
| - ປະລິນຍາຕີ ແລະ ຊັ້ນສູງ | **130.000** ກີບ/ເດືອນ; |
| - ຊັ້ນກາງ | **100.000** ກີບ/ເດືອນ. |

• ສໍາລັບຄ່າໃຊ້ຈ່າຍຕ່າງໆໃນການຮຽນ ເຊັ່ນ: ຄ່າທໍານຽມລົງທະບຽນເຂົ້າຮຽນ-ຮັບໃບປະກາສະນີຍະບັດ, ຄ່າເອກະສານ ແລະ ຄ່າອຸປະກອນຮັບໃຊ້ການຮຽນ ແມ່ນປະຕິບັດ ດັ່ງນີ້:

- ປະລິນຍາເອກ **3.000.000** ກີບ/ຊຸດຮຽນ;
- ປະລິນຍາໂທ **2.500.000** ກີບ/ຊຸດຮຽນ;
- ປະລິນຍາຕີ **2.000.000** ກີບ/ຊຸດຮຽນ;
- ຊັ້ນສູງ **1.500.000** ກີບ/ຊຸດຮຽນ;
- ຊັ້ນກາງ **1.000.000** ກີບ/ຊຸດຮຽນ.

• ສ່ວນທີ່ພັກ ແມ່ນແຕ່ລະຄົນເປັນຜູ້ຮັບຜິດຊອບເອງ.

**4.2 ນະໂຍບາຍຕໍ່ພະນັກງານໄປຮຽນເວລານອກໂມງລັດຖະການ; ວັນພັກລັດຖະການ, ຮຽນເຄິ່ງວັນ ແລະ ເຮັດວຽກເຄິ່ງວັນ:**

- ພະນັກງານປະຈໍາການທີ່ການຈັດຕັ້ງໄດ້ສົ່ງໄປຮຽນເວລານອກໂມງລັດຖະການ ຢ່າງເປັນທາງການ ພວກ ກ່ຽວຈະໄດ້ຮັບນະໂຍບາຍທັງໝົດ ຄືກັບພະນັກງານທີ່ເຮັດວຽກປົກກະຕິ ແລະ ຈະໄດ້ຮັບເງິນອຸດໜູນການສຶກສາ, ຄ່າໃຊ້ຈ່າຍຕ່າງໆໃນການຮຽນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ **4.1** ຂອງມາດຕານີ້.

- ພະນັກງານທີ່ການຈັດຕັ້ງສົ່ງໄປຮຽນ ຢ່າງເປັນທາງການ ພຽງແຕ່ເຄິ່ງວັນ ຈະໄດ້ຮັບນະໂຍບາຍທັງໝົດຄື ກັບພະນັກງານທີ່ເຮັດວຽກປົກກະຕິ, ເງິນອຸດໜູນການສຶກສາ ແລະ ຄ່າໃຊ້ຈ່າຍຕ່າງໆໃນການຮຽນ, ສ່ວນນະໂຍ ບາຍເງິນບໍາເນັດ ແລະ ເງິນແຮງງານບໍ່ພັກການປະຈໍາປີ ຈະໄດ້ຮັບເທົ່າກັບເຄິ່ງໜຶ່ງຂອງອັດຕາທີ່ກໍານົດໄວ້.

**4.3 ການຊໍາລະຄ່າຮຽນ:**

ພະນັກງານທະນາຄານແຫ່ງ ສປປ ລາວ ທີ່ໄດ້ສົ່ງໄປຮຽນໃນລະດັບຕ່າງໆ ຖ້າການຈັດຕັ້ງໄດ້ຮັບຜິດຊອບ ຄ່າຮຽນ ແມ່ນຈະບໍ່ໄດ້ຮັບເງິນອຸດໜູນການສຶກສາໃນແຕ່ລະເດືອນ.

**4.4 ພະນັກງານໄປຮຽນດ້ວຍທຶນຕົນເອງ:**

ພະນັກງານທີ່ມີຈຸດປະສົງໄປຮຽນດ້ວຍທຶນຕົນເອງທັງໃນໂມງ ແລະ ນອກໂມງລັດຖະການ ຕ້ອງສະເໜີ ກົມຈັດຕັ້ງແລະພະນັກງານ ໂດຍຜ່ານກົມກອງທີ່ຕົນສັງກັດ ເພື່ອສະເໜີການຈັດຕັ້ງຂັ້ນເທິງພິຈາລະນາອະນຸມັດ ຢ່າງເປັນທາງການ ຈຶ່ງຈະໄດ້ຮັບບາງນະໂຍບາຍທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຕາມແຕ່ລະກໍລະນີ.

**4.5** ນະໂຍບາຍການຂຽນບົດປ້ອງກັນ ຫຼື ວິທະຍານິພົນ (ເກັບກໍາຂໍ້ມູນ, ການພິມປຶ້ມ ແລະ ການໃຊ້ຈ່າຍ ຕ່າງໆ ທີ່ຕິດພັນກັບບົດຈົບຊັ້ນ):

• ສໍາລັບຜູ້ທີ່ຂຽນບົດປ້ອງກັນ ຫຼື ວິທະຍານິພົນ ກ່ອນຈະຈົບຫຼັກສູດການຮຽນ ຈະໄດ້ຮັບນະໂຍບາຍອຸດ ໜູນການຂຽນບົດດັ່ງກ່າວ ດັ່ງນີ້:

- ປະລິນຍາເອກ **5.000.000** ກີບ;
- ປະລິນຍາໂທ **3.000.000** ກີບ;
- ອະນຸປະລິນຍາໂທ **2.000.000** ກີບ;
- ປະລິນຍາຕີ **1.800.000** ກີບ;
- ຊັ້ນສູງ **1.500.000** ກີບ;
- ຊັ້ນກາງ **1.000.000** ກີບ.

ມາດຕາ 5 ນະໂຍບາຍຕໍ່ພະນັກງານທີ່ຮຽນ ຢູ່ຕ່າງປະເທດ

ກ. ຢູ່ປະເທດ ສສ ຫວຽດນາມ:

ພະນັກງານທີ່ການຈັດຕັ້ງສົ່ງໄປຮຽນໄລຍະຍາວ (ເກີນ 1 ປີ) ຢ່າງຂາດຕົວ, ໃນໄລຍະທີ່ໄປຮຽນຈະໄດ້ຮັບເງິນເດືອນ 100% (ສຳລັບຜູ້ມີຄອບຄົວ) ແລະ 90% (ສຳລັບຜູ້ໂສດ) ຂອງເງິນເດືອນພື້ນຖານຕາມ ຊັ້ນ-ຂັ້ນ ເງິນເດືອນຂອງຜູ້ກ່ຽວໄດ້ຮັບກ່ອນຈະໄປຮຽນ, ອຸດໜູນຄ່າເຊົ່າເຮືອນ, ນະໂຍບາຍສະຫວັດດີການສັງຄົມຕໍ່ພະນັກງານທະນາຄານແຫ່ງ ສປປ ລາວ ຄືກັບເວລາເຮັດວຽກປົກກະຕິ ແລະ ປະຕິບັດນະໂຍບາຍເງິນອຸດໜູນການຮຽນດັ່ງນີ້:

- ປະລິນຍາເອກ **300** ໂດລາສະຫະລັດ/ຄົນ/ປີ;
- ປະລິນຍາໂທ **250** ໂດລາສະຫະລັດ/ຄົນ/ປີ;
- ປະລິນຍາຕີ **200** ໂດລາສະຫະລັດ/ຄົນ/ປີ.

· ປະຕິບັດນະໂຍບາຍເພື່ອເປັນທຶນສົມທົບເຂົ້າໃນການໃຊ້ຈ່າຍເວລາເກັບກຳຂໍ້ມູນ, ຂຽນບົດ, ປ້ອງກັນບົດວິທະຍານິພົນ (ແຕ່ຕ້ອງມີເອກະສານອ້າງອີງການຂຽນບົດ ຈາກພາກສ່ວນທີ່ກ່ຽວຂ້ອງ) ຈິ່ງຈະໄດ້ຮັບນະໂຍບາຍດັ່ງກ່າວ ຕາມອັດຕາ ດັ່ງນີ້:

- ຄົ້ນຄວ້າລະດັບປະລິນຍາເອກ **1.600** ໂດລາສະຫະລັດ/ຄົນ/ຊຸດຮຽນ;
- ຄົ້ນຄວ້າລະດັບປະລິນຍາໂທ **1.300** ໂດລາສະຫະລັດ/ຄົນ/ຊຸດຮຽນ;
- ຮຽນລະດັບປະລິນຍາຕີ **800** ໂດລາສະຫະລັດ/ຄົນ/ຊຸດຮຽນ.

ນອກຈາກນະໂຍບາຍຂ້າງເທິງນີ້ແລ້ວ ພະນັກງານທີ່ໄປຮຽນໄລຍະຍາວ ໃນລະດັບຕ່າງໆເກີນ **1** ປີ (ຮຽນແບບປະຈຳການ) ຍັງຈະໄດ້ຮັບນະໂຍບາຍໃນການເດີນທາງໄປພົບອາຈານທີ່ປຶກສາ, ກະກຽມ-ປັບປຸງບົດ ຫຼື ປ້ອງກັນບົດ ຕາມການແຈ້ງຂອງໂຮງຮຽນກ່ຽວຂ້ອງ ຄື: ຄ່າເດີນທາງ ໄປ-ກັບ ລະຫວ່າງປະເທດ, ອັດຕາກິນ ແລະ ເງິນແຮບຸກຄົນ ຕາມລະບຽບການໄປວຽກທາງລັດຖະການ ຢູ່ຕ່າງປະເທດ ຂອງ ທຫລ (ສູງສຸດບໍ່ເກີນ **5** ວັນ/ຄັ້ງ) ຄື: ລະດັບປະລິນຍາເອກ ບໍ່ເກີນ **5** ຄັ້ງ/ຊຸດຮຽນ, ລະດັບປະລິນຍາໂທ ບໍ່ເກີນ **3** ຄັ້ງ/ຊຸດຮຽນ ແລະ ປະລິນຍາຕີ ບໍ່ເກີນ **1** ຄັ້ງ/ຊຸດຮຽນ.

ໃນກໍລະນີພະນັກງານທີ່ການຈັດຕັ້ງອະນຸຍາດໃຫ້ໄປຮຽນໄລຍະຍາວ ຢ່າງຂາດຕົວ ແຕ່ຮຽນບໍ່ສຳເລັດຕາມກຳນົດເວລາ ອັນເນື່ອງມາຈາກຄວາມຈຳເປັນທີ່ການຈັດຕັ້ງຮັບຮູ້ຢ່າງເປັນລາຍລັກອັກສອນ ແລະ ໄດ້ຂໍກັບຄືນມາປະຕິບັດວຽກງານກ່ອນ (ທັງຮຽນທັງປະຈຳການ) ແມ່ນປະຕິບັດນະໂຍບາຍເພີ່ມຕື່ມຈົນກວ່າຈະຮຽນຈົບ ຄື: ຄ່າເດີນທາງ ໄປ-ກັບ ຈຳນວນ **100** ໂດລາສະຫະລັດ/ຄັ້ງ (ສູງສຸດບໍ່ເກີນ **5** ຄັ້ງ ລວມທັງການໄປຮັບປະກາສະນິຍະບັດ) ແລະ ນະໂຍບາຍອັດຕາກິນ **20** ໂດລາສະຫະລັດ/ວັນ (ສູງສຸດບໍ່ເກີນ **5** ວັນ/ຄັ້ງ) ແຕ່ການໄປໃນແຕ່ລະຄັ້ງຕ້ອງມີເອກະສານການແຈ້ງຢ່າງເປັນລາຍລັກອັກສອນຈາກໂຮງຮຽນກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຂໍອະນຸຍາດລາພັກ ແລະ ປະຕິບັດນະໂຍບາຍດັ່ງກ່າວ.

ຂ. ຢູ່ປະເທດອື່ນໆ:

ພະນັກງານທີ່ການຈັດຕັ້ງສົ່ງໄປຮຽນໄລຍະຍາວ (ເກີນ 1 ປີ) ຢ່າງຂາດຕົວ, ໃນໄລຍະທີ່ໄປຮຽນຈະໄດ້ຮັບເງິນເດືອນ 70% (ສຳລັບຜູ້ມີຄອບຄົວ) ແລະ 50% (ສຳລັບຜູ້ໂສດ) ຂອງເງິນເດືອນພື້ນຖານຕາມ ຊັ້ນ-ຂັ້ນ ເງິນເດືອນຂອງຜູ້ກ່ຽວໄດ້ຮັບກ່ອນຈະໄປຮຽນ, ອຸດໜູນຄ່າເຊົ່າເຮືອນ, ນະໂຍບາຍສະຫວັດດີການສັງຄົມຕໍ່ພະນັກງານທະນາຄານແຫ່ງ ສປປ ລາວ ຄືກັບເວລາເຮັດວຽກປົກກະຕິ ແລະ ປະຕິບັດເງິນອຸດໜູນການຮຽນ ດັ່ງນີ້:

- ປະລິນຍາເອກ 300 ໂດລາສະຫະລັດ/ຄົນ/ປີ;
- ປະລິນຍາໂທ **250** ໂດລາສະຫະລັດ/ຄົນ/ປີ;
- ປະລິນຍາຕີ 200 ໂດລາສະຫະລັດ/ຄົນ/ປີ.

**ຄ. ກຳນົດຄ່າໃຊ້ຈ່າຍໃນການໄປທັດສະນະສຶກສາ, ຮັບໃບປະກາສະນີຍະບັດ ຢູ່ປະເທດ ສສ ຫວຽດນາມ ແລະ ປະເທດໄທ:**

ພະນັກງານທີ່ໄດ້ຮັບອະນຸຍາດຈາກຄະນະຜູ້ວ່າການ ໃຫ້ໄປທັດສະນະສຶກສາ, ຮັບໃບປະກາສະນີຍະບັດ ຢູ່ປະເທດ ສສ ຫວຽດນາມ ແລະ ປະເທດໄທ ຈະໄດ້ຮັບຄ່າໃຊ້ຈ່າຍ ດັ່ງນີ້:

1. ເງິນແຮບຸກຄົນ **200** ໂດລາສະຫະລັດ/ຄົນ/ຄັ້ງ;
2. ອັດຕາກິນ **20** ໂດລາສະຫະລັດ/ວັນ/ຄົນ;
3. ຄ່າທີ່ພັກ **70** ໂດລາສະຫະລັດ/ວັນ/ຄົນ;
4. ຄ່າເດີນທາງ ໄປ-ກັບ **50%.**

ສຳລັບອັດຕາກິນ ແລະ ທີ່ພັກຄິດໄລ່ໃຫ້ພາຍໃນກຳນົດເວລາບໍ່ເກີນ 4 ວັນ ຖ້າກາຍກຳນົດເວລາດັ່ງກ່າວ ແມ່ນຜູ້ກ່ຽວຮັບຜິດຊອບເອງ.

## ໝວດທີ IV
## ວ່າດ້ວຍການຈັດຕັ້ງປະຕິບັດ

**ມາດຕາ 6** ມອບໃຫ້ຫ້ອງການ, ກົມຈັດຕັ້ງແລະພະນັກງານ, ບັນດາກົມ, ຫຽບເທົ່າ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ເປັນເຈົ້າການຈັດຕັ້ງເຜີຍແຜ່ເຊື່ອມຊຶມຂໍ້ຕົກລົງສະບັບນີ້ ໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຊາບຢ່າງທົ່ວເຖິງ ແລະ ພ້ອມກັນຈັດຕັ້ງໃຫ້ເປັນເອກະພາບ ແລະ ມີປະສິດທິຜົນສູງ.

**ມາດຕາ 7** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ສຳລັບຜູ້ທີ່ໄດ້ຮັບການແຕ່ງຕັ້ງໄປຍົກລະດັບ ພາຍຫຼັງປະກາດໃຊ້ຂໍ້ຕົກລົງສະບັບນີ້. ທຸກນິຕິກຳທີ່ນຳໃຊ້ໃນເມື່ອກ່ອນ ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**